ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 279 /ລບ
ນະຄອນຫຼວງວຽງຈັນ, ວັນທີ 09.08.2022

ດຳລັດ
ວ່າດ້ວຍພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍສັນຊາດລາວ ສະບັບເລກທີ 29/ສພຊ, ລົງວັນທີ 01 ພະຈິກ 2017;
- ອີງຕາມ ໜັງສືສະເໜີຂອງກະຊວງຍຸຕິທຳ ສະບັບເລກທີ 777/ກຍ, ລົງວັນທີ 17 ມີຖຸນາ 2022.

ລັດຖະບານ ອອກດຳລັດ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ການພິຈາລະນາໃຫ້ ແລະ ຖອນນາມມະຍົດພົນລະເມືອງກິດຕິມະສັກ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແນໃສ່ຮັບຮູ້ຄຸນງາມຄວາມດີພົ້ນເດັ່ນ, ຜົນງານອັນໃຫຍ່ຫຼວງເປັນພິເສດ, ຄວາມຮູ້ຄວາມສາມາດໂດດເດັ່ນ, ເຊີດຊູກຽດສັກສີ ແລະ ຍົກສູງຄວາມຮັບຜິດຊອບຂອງພົນລະເມືອງກິດຕິມະສັກ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

ມາດຕາ 2 ພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ແມ່ນນາມມະຍົດໃນລັກສະນະສັນຍາລັກ ຊຶ່ງລັດຖະບານແຫ່ງ ສປປ ລາວ ມອບໃຫ້ແກ່ຄົນຕ່າງປະເທດທີ່ມີຄຸນງາມຄວາມດີພົ້ນເດັ່ນ ແລະ ຜົນງານອັນໃຫຍ່ຫຼວງເປັນພິເສດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

ການໃຫ້ນາມມະຍົດພົນລະເມືອງກິດຕິມະສັກ ຈະບໍ່ພາໃຫ້ມີການປ່ຽນແປງສັນຊາດເດີມຂອງຜູ້ກ່ຽວ.

ພົນລະເມືອງກິດຕິມະສັກ ເປັນນາມມະຍົດທີ່ຕິດພັນກັບຕົວບຸກຄົນ ຊຶ່ງບໍ່ສາມາດສືບທອດໄດ້.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຄົນຕ່າງປະເທດ ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນຊຶ່ງ ເຂົ້າມາ ສປປ ລາວ ຊົ່ວຄາວ ຫຼື ຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ, ເມື່ອໝົດກຳນົດແລ້ວກໍກັບຄືນ ຊຶ່ງບຸກຄົນເຫຼົ່ານີ້ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

2. ຄຸນງາມຄວາມດີພົ້ນເດັ່ນ ໝາຍເຖິງ ຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງ ໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ;

3. ຜົນງານອັນໃຫຍ່ຫຼວງເປັນພິເສດ ໝາຍເຖິງ ການປະກອບສ່ວນທາງດ້ານທຶນຮອນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ແກ່ລັດຖະບານ ສປປ ລາວ ແລະ ນຳທຶນເຂົ້າມາດຳເນີນທຸລະກິດຢູ່ ສປປ ລາວ;

4. ຄວາມຮູ້, ຄວາມສາມາດໂດດເດັ່ນ ໝາຍເຖິງ ຄວາມຮູ້, ຄວາມສາມາດດ້ານວິຊາສະເພາະຂັ້ນຊ່ຽວ ຊານລະດັບປະລິນຍາເອກຂຶ້ນໄປ, ສາດສະດາจານ, ນັກປາດ ແລະ ພອນສະຫວັນພິເສດດ້ານໃດໜຶ່ງທີ່ ພັກ-ລັດ ມີຄວາມຕ້ອງການ;

5. ການຈັດຕັ້ງທີ່ກ່ຽວຂ້ອງ ໝາຍເຖິງ ການຈັດຕັ້ງທີ່ຄົນຕ່າງປະເທດປະຕິບັດໜ້າທີ່ຢູ່;

6. ບັດພົນລະເມືອງກິດຕິມະສັກ ໝາຍເຖິງ ບັດຢັ້ງຢືນນາມມະຍົດ ຊຶ່ງອອກໃຫ້ພົນລະເມືອງກິດຕິມະສັກ.

ມາດຕາ 4 ຫຼັກການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງນະ�โยบาย, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;

2. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ອິດຄອງປະເພນີອັນດີງາມ ຂອງຊາດລາວ;

3. ຮັບປະກັນການຮັກສາຄວາມລັບຂອງຊາດ, ຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຄົນຕ່າງປະເທດ ຕາມກົດໝາຍ;

5. ຮັບປະກັນຄວາມເປັນເອກະພາບ, ໂປ່ງໃສ, ຖືກຕ້ອງ ແລະ ຍຸຕິທຳ.

ມາດຕາ 5 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບຄົນຕ່າງປະເທດ ທີ່ດຳລົງຊີວິດ ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ.

ໝວດທີ 2
ເງື່ອນໄຂ ແລະ ຂັ້ນຕອນ ການເປັນພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ມາດຕາ 6 ເງື່ອນໄຂການເປັນພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ຜູ້ທີ່ຈະເປັນພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ຕ້ອງມີຄົບເງື່ອນໄຂລວມ ແລະ ມີເງື່ອນໄຂສະເພາະໃດໜຶ່ງ ດັ່ງນີ້:

1. ເງື່ອນໄຂລວມ:

- ມີຄວາມສະໝັກໃຈ ແລະ ມີອາຍຸແຕ່ 18 ປີ ຂຶ້ນໄປ ໃນເວລາຍື່ນຄຳຮ້ອງຂໍເປັນພົນລະເມືອງກົດຕິມະສັກ ຂອງ ສປປ ລາວ;

- ມີຄວາມຍົນດີ ເຄົາລົບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

- ບໍ່ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;

- ມີສຸຂະພາບດີ, ບໍ່ເປັນພະຍາດຕິດແປດທີ່ຮ້າຍແຮງ, ບໍ່ຕິດສິ່ງເສບຕິດ.

2. ເງື່ອນໄຂສະເພາະ:

- ມີຄຸນງາມຄວາມດີພົ້ນເດັ່ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ;

- ມີຄວາມຮູ້, ຄວາມສາມາດດ້ານວິຊາສະເພາະຂັ້ນຊ່ຽວຊານ ລະດັບປະລິນຍາເອກຂຶ້ນໄປ, ສາດສະດາຈານ, ນັກປາດ ແລະ ມີພອນສະຫວັນພິເສດດ້ານໃດໜຶ່ງ ທີ່ພັກ-ລັດ ມີຄວາມຕ້ອງການ;

- ເປັນນັກທຸລະກິດທີ່ປະສົບຜົນສຳເລັດທາງດ້ານທຸລະກິດໃດໜຶ່ງຂອງຕົນ ທີ່ພັກ-ລັດ ມີຄວາມຕ້ອງການ, ໄດ້ມອບທຶນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ແກ່ລັດຖະບານ ສປປ ລາວ ແຕ່ 500,000 ໂດລາສະຫະລັດ ຂຶ້ນໄປ ແລະ ໄດ້ນຳທຶນເຂົ້າມາລົງທຶນດຳເນີນທຸລະກິດ ຢູ່ ສປປ ລາວ ແຕ່ 1,000,000 ໂດລາສະຫະລັດຂຶ້ນໄປ ກ່ອນການຍື່ນຄຳຮ້ອງຂໍເປັນພົນລະເມືອງກົດຕິມະສັກ.

ມາດຕາ 7 ເອກະສານປະກອບການຂໍເປັນພົນລະເມືອງກົດຕິມະສັກ ຂອງ ສປປ ລາວ

ເອກະສານປະກອບການຂໍເປັນພົນລະເມືອງກົດຕິມະສັກ ຂອງ ສປປ ລາວ ມີ ດັ່ງນີ້:

1. ຄຳຮ້ອງຂໍເປັນພົນລະເມືອງກົດຕິມະສັກ;
2. ໃບຢັ້ງຢືນການໂອນທຶນຈາກທະນາຄານ ແຫ່ງ ສປປ ລາວ ສຳລັບນັກລົງທຶນ ຫຼື ນັກທຸລະກິດ;
3. ໃບຊີວະປະຫວັດ ທີ່ຜ່ານການຢັ້ງຢືນຈາກກະຊວງປ້ອງກັນຄວາມສະຫງົບ;
4. ໃບຢັ້ງຢືນ ຜົນງານ ແລະ ຄຸນງາມຄວາມດີ ໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ອອກໃຫ້ໂດຍຂະແໜງການກ່ຽວຂ້ອງ ຂອງ ສປປ ລາວ;
5. ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ;
6. ໃບຢັ້ງຢືນທີ່ຢູ່;
7. ໃບແຈ້ງໂທດຂອງປະເທດຜູ້ຮ້ອງຂໍ;
8. ໃບຢັ້ງຢືນສຸຂະພາບ;
9. ຮູບຖ່າຍຂະໜາດ 3x4 ພື້ນສີຂາວຈຳນວນ 6 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ).

ທຸກເອກະສານ ຕ້ອງເປັນພາສາລາວ, ຖ້າເອກະສານໃດຫາກເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ຕ້ອງມີການຢັ້ງຢືນຄວາມຖືກຕ້ອງຈາກໜ່ວຍງານທະບຽນສານປະຈຳສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຫຼື ອົງການທະບຽນສານ ຢູ່ ສປປ ລາວ.

ມາດຕາ 8 ຂັ້ນຕອນການເປັນພົນລະເມືອງກົດຕິມະສັກ ຂອງ ສປປ ລາວ

ຂັ້ນຕອນການເປັນພົນລະເມືອງກົດຕິມະສັກ ຂອງ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:

1. ການຍື່ນຄຳຮ້ອງ;
2. ການຄົ້ນຄວ້າຄຳຮ້ອງ;

3. ການຕົກລົງ;
4. ການມອບນາມມະຍົດພົນລະເມືອງກິດຕິມະສັກ.

ມາດຕາ 9 ການຍື່ນຄຳຮ້ອງຂໍເປັນພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ຄົນຕ່າງປະເທດທີ່ດຳລົງຊີວິດ ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ທີ່ມີຈຸດປະສົງຂໍເປັນພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ຕ້ອງຂຽນຄຳຮ້ອງດ້ວຍຕົນເອງ ຫຼື ຜູ້ຕາງໜ້າ, ຍາດພີ່ນ້ອງ ທີ່ໄດ້ຮັບມອບສິດ ແລະ ປະ ກອບເອກະສານຕ່າງໆ ຕາມມາດຕາ 7 ຂອງດຳລັດສະບັບນີ້ ແລ້ວຍື່ນຕໍ່ກະຊວງຍຸຕິທຳ ໂດຍຜ່ານກະຊວງການຕ່າງປະເທດ ຫຼື ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ປະເທດຜູ້ຮ້ອງຂໍ.

ມາດຕາ 10 ການຄົ້ນຄວ້າຄຳຮ້ອງ

ພາຍຫຼັງໄດ້ຮັບສຳນວນຄຳຮ້ອງແລ້ວ ກະຊວງຍຸຕິທຳ ຕ້ອງໄດ້ກວດກາຄວາມຖືກຕ້ອງ, ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງເປັນ ຕົ້ນໄປ.

ໃນກໍລະນີເຫັນວ່າ ມີບັນຫາໃດໜຶ່ງຍັງບໍ່ຈະແจ້ງ ກໍສາມາດສອບຖາມຜູ້ຮ້ອງຂໍ ຫຼື ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ, ເມື່ອເຫັນວ່າຖືກຕ້ອງ, ຄົບຖ້ວນແລ້ວ ກະຊວງຍຸຕິທຳ ຕ້ອງຄົ້ນຄວ້າພາຍໃນກຳນົດເວລາ 30 ວັນ ແລະ ນຳສະເໜີຕໍ່ລັດຖະບານ ພິຈາລະນາ.

ມາດຕາ 11 ການຕົກລົງ

ລັດຖະບານ ເປັນຜູ້ຕົກລົງອະນຸມັດໃຫ້ຄົນຕ່າງປະເທດໄດ້ຮັບນາມມະຍົດ ພົນລະເມືອງກິດຕິມະສັກ ຕາມການສະເໜີຂອງກະຊວງຍຸຕິທຳ.

ມາດຕາ 12 ການຈົດທະບຽນພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ພາຍຫຼັງທີ່ລັດຖະບານໄດ້ຕົກລົງໃຫ້ນາມມະຍົດພົນລະເມືອງກິດຕິມະສັກແລ້ວ ໃຫ້ໄປຈົດທະບຽນຢູ່ກະຊວງພາຍໃນ.

ມາດຕາ 13 ການມອບນາມມະຍົດພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ການມອບນາມມະຍົດພົນລະເມືອງກິດຕິມະສັກ ຕ້ອງຈັດຂຶ້ນຢ່າງສົມກຽດ ໂດຍແມ່ນນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໃຫ້ກຽດມອບນາມມະຍົດດັ່ງກ່າວ ໂດຍມີການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.

ການມອບນາມມະຍົດພົນລະເມືອງກິດຕິມະສັກ ຈັດຂຶ້ນປີລະໜຶ່ງຄັ້ງ.

ໝວດທີ 3
ສິດ ແລະ ພັນທະ ຂອງພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ມາດຕາ 14 ສິດຂອງພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ມີສິດ ດັ່ງນີ້:

1. ເດີນທາງເຂົ້າ-ອອກ ສປປ ລາວ ໂດຍບໍ່ຈຳເປັນຕ້ອງມີວີຊ່າ;

2. ດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ;

3. ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຫຼື ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ແລະ ເຊົ່າທີ່ດິນຂອງພົນລະເມືອງລາວ;

4. ເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ;

5. ບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຊີວິດ, ຮ່າງກາຍ, ກຽດສັກສີ ແລະ ເຄຫະສະຖານ, ຈະບໍ່ຖືກຈັບຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານໂດຍບໍ່ມີຄຳສັ່ງຂອງອົງການທີ່ກ່ຽວຂ້ອງ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ;

6. ສະເໜີ ແລະ ຮ້ອງຂໍຄວາມເປັນທຳຕໍ່ອົງການທີ່ກ່ຽວຂ້ອງ ຂອງ ສປປ ລາວ ກ່ຽວກັບບັນຫາທີ່ພົວພັນກັບສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ;

7. ມີເສລີພາບໃນການຄົ້ນຄວ້າ ແລະ ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳທີ່ບໍ່ຂັດກັບກົດໝາຍ;

8. ນຳໃຊ້ສິດອື່ນຄືກັນກັບຄົນຕ່າງປະເທດ ທີ່ເຮັດວຽກ ຫຼື ດຳລົງຊີວິດ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 15 ພັນທະຂອງພົນລະເມືອງກົດຕົມະສັກ ຂອງ ສປປ ລາວ

ພົນລະເມືອງກົດຕົມະສັກ ຂອງ ສປປ ລາວ ມີພັນທະ ດັ່ງນີ້:

1. ເຄົາລົບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

2. ປະຕິບັດພັນທະເສຍພາສີ ແລະ ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;

3. ປະກອບສ່ວນຢ່າງຕັ້ງໜ້າ ແລະ ຫ້າວຫັນ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາ ສປປ ລາວ;

4. ເຄົາລົບຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດລາວ ແລະ ຂອງທ້ອງຖິ່ນ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ໝວດທີ 4
ການຖອນນາມມະຍົດພົນລະເມືອງກົດຕົມະສັກ ຂອງ ສປປ ລາວ

ມາດຕາ 16 ເງື່ອນໄຂການຖອນນາມມະຍົດ ພົນລະເມືອງກົດຕົມະສັກ ຂອງ ສປປ ລາວ

ນາມມະຍົດ ພົນລະເມືອງກົດຕົມະສັກ ຂອງ ສປປ ລາວ ອາດຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງຕໍ່ຜົນປະ�โຫຍດ ຂອງ ສປປ ລາວ;

2. ຖືກສານປະຊາຊົນຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;

3. ມີພຶດຕິກຳລະເມີດຂໍ້ຫ້າມໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງດຳລັດ ສະບັບນີ້;

4. ຂໍຖອນນາມມະຍົດພົນລະເມືອງກົດຕົມະສັກ ດ້ວຍຕົນເອງ ຫຼື ມີການສະເໜີຂອງການຈັດຕັ້ງທີ່ກ່ຽວຂ້ອງ.

ມາດຕາ 17 ການຕົກລົງຖອນນາມມະຍົດ ພົນລະເມືອງກົດຕົມະສັກ ຂອງ ສປປ ລາວ

ລັດຖະບານ ເປັນຜູ້ຕົກລົງຖອນນາມມະຍົດພົນລະເມືອງກົດຕົມະສັກ ຂອງ ສປປ ລາວ ຕາມການສະເໜີ ຂອງກະຊວງຍຸຕິທຳ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ໝວດທີ 5
ຂໍ້ຫ້າມ

ມາດຕາ 18 ຂໍ້ຫ້າມສຳລັບພົນລະເມືອງກົດຕົມະສັກ ຂອງ ສປປ ລາວ

ຫ້າມພົນລະເມືອງກົດຕົມະສັກ ຂອງ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
2. ລະເມີດລັດຖະທຳມະນູນ, ກົດໝາຍ, ລະບຽບການ, ຮີດຄອງປະເພນີອັນດີງາມຂອງຊາດລາວ ແລະ ຂອງທ້ອງຖິ່ນ;
3. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;
4. ສວຍໃຊ້ນາມມະຍົດ ພົນລະເມືອງກົດຕົມະສັກຂອງຕົນໃນທາງທີ່ບໍ່ຖືກຕ້ອງ;
5. ເຄື່ອນໄຫວທາງການເມືອງໃນທາງທີ່ບໍ່ຖືກຕ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 19 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ພິຈາລະນາການໃຫ້ນາມມະຍົດພົນລະເມືອງກົດຕົມະສັກ ໂດຍບໍ່ຜ່ານການຕົກລົງຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້;
2. ຮັບ, ທວງເອົາ ຫຼື ໃຫ້ສິນບົນ;
3. ໃຊ້ອຳນາດເກີນຂອບເຂດ, ບັງຄັບ, ນາບຂູ່, ຂັດຂວາງ ຫຼື ຕົກລົງບັນຫາທີ່ບໍ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
4. ກົດໜ່ວງ, ຖ່ວງດຶງ ຫຼື ທຳລາຍເອກະສານ ກ່ຽວກັບການຂໍເປັນພົນລະເມືອງກົດຕົມະສັກ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 20 ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ

ຫ້າມການຈັດຕັ້ງ ແລະ ບຸກຄົນອື່ນ ມີພຶດຕິກຳ ດັ່ງນີ້:

1. ບໍ່ໃຫ້ການຮ່ວມມື ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່;
2. ໃຫ້ຂໍ້ມູນບໍ່ຖືກຕ້ອງ, ສົມຮູ້ຮ່ວມຄິດ, ປອມແປງ, ກົດໜ່ວງ, ຖ່ວງດຶງ, ຊຸກເຊື່ອງ ແລະ ທຳລາຍເອກະສານ ຫຼື ຫຼັກຖານ ກ່ຽວກັບການຂໍເປັນພົນລະເມືອງກົດຕົມະສັກ;
3. ທວງເອົາ, ຮັບເອົາຜົນປະໂຫຍດໃດໜຶ່ງຈາກຜູ້ໄດ້ຮັບນາມມະຍົດພົນລະເມືອງກົດຕົມະສັກ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ໝວດທີ 6
ການຄຸ້ມຄອງ ແລະ ການກວດກາ ວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ

ມາດຕາ 21 ອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາ ວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ປະກອບດ້ວຍ:

1. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
2. ກະຊວງຍຸຕິທຳ;
3. ກະຊວງການຕ່າງປະເທດ;
4. ກະຊວງປ້ອງກັນຄວາມສະຫງົບ;
5. ກະຊວງແຜນການ ແລະ ການລົງທຶນ;
6. ກະຊວງການເງິນ;
7. ກະຊວງພາຍໃນ.

ມາດຕາ 22 ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃນການຄົ້ນຄວ້າສຳນວນຄຳຮ້ອງ ຂໍເປັນພົນລະເມືອງກິດຕິມະສັກ ຕາມການສະເໜີຂອງກະຊວງຍຸຕິທຳ ເພື່ອລາຍງານນາຍົກລັດຖະມົນຕີ ໂດຍຜ່ານຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານຂົງເຂດການປົກຄອງ ແລະ ວັດທະນະທຳ-ສັງຄົມ;
2. ຊຸກຍູ້ການຕິດຕາມ, ກວດກາ ແລະ ສັງລວມຂໍ້ມູນກ່ຽວກັບການເຄື່ອນໄຫວວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ອອກແຈ້ງການອະນຸມັດໃຫ້ເປັນພົນລະເມືອງກິດຕິມະສັກ ໄປຍັງກະຊວງປ້ອງກັນຄວາມສະຫງົບ ເພື່ອອອກບັດພົນລະເມືອງກິດຕິມະສັກ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ເພື່ອສະເໜີລັດຖະບານພິຈາລະນາ;
2. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;
3. ຄົ້ນຄວ້າ, ສ້າງ ແບບພິມຄຳຮ້ອງຂໍເປັນພົນລະເມືອງກິດຕິມະສັກ;
4. ກວດກາຄວາມຖືກຕ້ອງ, ຄົບຖ້ວນ ຂອງສຳນວນຄຳຮ້ອງຂໍເປັນພົນລະເມືອງກິດຕິມະສັກ ພ້ອມທັງ ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ພິຈາລະນາ;
5. ສະເໜີລັດຖະບານ ເພື່ອພິຈາລະນາການຖອນນາມມະຍົດພົນລະເມືອງກິດຕິມະສັກ;

6. ຮັບ ແລະ ພິຈາລະນາແກ້ໄຂຄຳຮ້ອງ, ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ພົວພັນເຖິງວຽກງານພົນລະເມືອງກິດຕິມະສັກ;

7. ປະສານສົມທົບ ກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນວຽກງານພົນລະເມືອງກິດຕິມະສັກ;

8. ຕິດຕາມ, ກວດກາ ວຽກງານພົນລະເມືອງກິດຕິມະສັກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານພົນລະເມືອງກິດຕິມະສັກ ຕໍ່ລັດຖະບານຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 24 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

2. ຮັບ ແລະ ມີຄຳເຫັນຕໍ່ສຳນວນຄຳຮ້ອງຂໍເປັນພົນລະເມືອງກິດຕິມະສັກ;

3. ປະເມີນຄຸນງາມຄວາມດີຂອງຜູ້ທີ່ຮ້ອງຂໍເປັນພົນລະເມືອງກິດຕິມະສັກ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂໍ້ 2 ຂອງດຳລັດສະບັບນີ້;

4. ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານພົນລະເມືອງກິດຕິມະສັກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 25 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

2. ກວດກາ, ອອກໃບຢັ້ງຢືນ ແລະ ມີຄຳເຫັນ ກ່ຽວກັບປະຫວັດການເຄື່ອນໄຫວຂອງຜູ້ຮ້ອງຂໍເປັນພົນລະເມືອງກິດຕິມະສັກ;

3. ອອກບັດພົນລະເມືອງກິດຕິມະສັກ ໃຫ້ຄົນຕ່າງປະເທດພາຍຫຼັງທີ່ລັດຖະບານໄດ້ຕົກລົງອະນຸມັດນາມ ມະຍົດດັ່ງກ່າວ;

4. ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານພົນລະເມືອງກິດຕິມະສັກ ຕາມຂອບເຂດຄວາມຮັບຜິດ ຊອບຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 26 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

2. ມີຄຳເຫັນຢັ້ງຢືນ ກ່ຽວກັບການດຳເນີນທຸລະກິດ ແລະ ການນຳທຶນເຂົ້າມາລົງທຶນ ຂອງຜູ້ຮ້ອງຂໍເປັນພົນລະເມືອງກິດຕິມະສັກ ໂດຍຜ່ານທະນາຄານ ແຫ່ງ ສປປ ລາວ;

3. ອຳນວຍຄວາມສະດວກ, ຊຸກຍູ້ສົ່ງເສີມພົນລະເມືອງກິດຕິມະສັກທີ່ເປັນນັກທຸລະກິດ ໃຫ້ລົງທຶນໃນຂະແໜງການລົງທຶນຕ່າງໆ ທີ່ນອນໃນແຜນພັດທະນາເສດຖະກິດ-ສັງຄົມ;

4. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ພົນລະເມືອງກິດຕິມະສັກ ທີ່ເປັນນັກທຸລະກິດ ດຳເນີນທຸລະກິດໃຫ້ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

5. ໃຫ້ນະໂຍບາຍສົ່ງເສີມການລົງທຶນ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຂອງ ສປປ ລາວ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 27 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

2. ມີຄຳເຫັນຢັ້ງຢືນກ່ຽວກັບ ການເສຍພາສີ, ອາກອນ ແລະ ພັນທະອື່ນ ຂອງຜູ້ຮ້ອງຂໍເປັນພົນລະ ເມືອງ ກິດຕິມະສັກ;

3. ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານພົນລະເມືອງກິດຕິມະສັກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 28 ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ

ໃນການຄຸ້ມຄອງວຽກງານພົນລະເມືອງກິດຕິມະສັກ ຂອງ ສປປ ລາວ ກະຊວງພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານພົນລະເມືອງກິດຕິມະສັກ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;

2. ມີຄຳເຫັນຢັ້ງຢືນ ຜົນງານ ແລະ ຄຸນງາມຄວາມດີ ໃນການປະກອບສ່ວນເຂົ້າໃນການພັດທະນາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາ ສປປ ລາວ ຂອງຜູ້ຮ້ອງຂໍເປັນພົນລະເມືອງກິດຕິມະສັກ;

3. ຈົດທະບຽນພົນລະເມືອງກິດຕິມະສັກ ພາຍຫຼັງທີ່ລັດຖະບານໄດ້ຕົກລົງອະນຸມັດມອບນາມມະຍົດພົນລະເມືອງກິດຕິມະສັກແລ້ວ;

4. ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານພົນລະເມືອງກົດຕິມະສັກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 29 ເນື້ອໃນການກວດກາ

ການກວດກາວຽກງານພົນລະເມືອງກົດຕິມະສັກ ຂອງ ສປປ ລາວ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຄວາມຮັບຜິດຊອບຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
2. ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານພົນລະເມືອງກົດຕິມະສັກ;
3. ການປະຕິບັດວຽກງານພົນລະເມືອງກົດຕິມະສັກຂອງການຈັດຕັ້ງທີ່ກ່ຽວຂ້ອງ.

ມາດຕາ 30 ຮູບການກວດກາ

ການກວດກາວຽກງານພົນລະເມືອງກົດຕິມະສັກ ຂອງ ສປປ ລາວ ມີ ດັ່ງນີ້ :

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ແຕ່ຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານພົນລະເມືອງກົດຕິມະສັກ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ໝວດທີ 7
ນະ�โยบายต่ผู้มีผินงาน ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

ໝວດທີ 8
ບົດບັນຍັດສຸດທ້າຍ

ມາດຕາ 33 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງຍຸຕິທຳ ເປັນໃຈກາງປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງພາຍໃນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງ, ອົງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 34 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ໃນວັນທີ 01 ຕຸລາ 2022 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ